ທະນາຄານຮ່ວມພັດທະນາ

| **Position ID:** | EXC_DST/Credit |
|---|---|

# ລາຍລະອຽດຂອງໜ້າວຽກ ແລະ ເງື່ອນໄຂການສະໝັກ

**ຊື່ຕຳແໜ່ງ:** ພະນັກງານ ຕິດຕາມໜີ້

**Position Name:** ***Debt Settlement Officer***

❖ ໜ້າທີ່ຮັບຜິດຊອບຫຼັກ (ToR):

- ວາງແຜນຄວບຄຸມໜີ້ເພື່ອປ້ອງກັນບໍ່ໃຫ້ເກີດມີໜີ້ເສຍ.
- ຕິດຕາມການຄ້າງຊຳລະໜີ້ຂອງລູກຄ້າສິນເຊື່ອທຸກລາຍການ;
- ດຳເນີນການແຈ້ງເຕືອນໃຫ້ພະນັກງານສິນເຊື່ອ RM ເພື່ອໂທແຈ້ງເຕືອນລູກຄ້າ ພ້ອມສອບຖາມເຖິງສາເຫດທີ່ຜິດນັດຊຳລະ (ລູກຄ້າທີ່ຜິດຊຳລະເກີນ 01 ວັນຂຶ້ນໄປ);
- ປະສານສົມທົບກັບ RM ເພື່ອອອກໃບແຈ້ງເຕືອນ, ໜັງສືເຊີນ, ເຮັດບົດບັນທຶກໄກ່ເກ່ຍໜີ້ລູກຄ້າທີ່ຜິດນັດຊຳລະ;
- ລົງຕິດຕາມລູກຄ້າ ທີ່ຜິດນັດຊຳລະ ໂດຍສົມທົບກັບພະນັກງານສິນເຊື່ອ ແລະ ພາກສ່ວນທີ່ກ່ຽວຂ້ອງ;
- ລາຍງານຄວາມຄືບໜ້າໃນການຕິດຕາມໜີ້ ແລະ ສະເໜີວິທີແກ້ໄຂໜີ້ສິນ ຕໍ່ຄະນະພະແນກສິນເຊື່ອ;
- ສະເໜີລາຍການລູກຄ້າ ທີ່ຈະປັບໂຄງສ້າງໜີ້ ໃຫ້ພະແນກບໍລິຫານຄວາມສ່ຽງ ເພື່ອຄົ້ນຄວ້າ ສະເໜີຄະນະກຳມະການສິນເຊື່ອ ພິຈາລະນາ;
- ຕິດຕາມໜີ້ບັດເຄຼດິດ;
- ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຫົວໜ້າສາຍງານ.

❖ ວຸດທິການສຶກສາ (Academic Background):

- ຜູ້ທີ່ສະໝັກໃນຕຳແໜ່ງນີ້ຈະຕ້ອງຮຽນຈົບລະດັບ ປະລິນຍາຕີ ຂຶ້ນໄປໃນສາຂາວິຊາ:
  - ການທະນາຄານ ຫຼື ເສດຖະສາດ;
  - ການຕະຫຼາດ;
  - ບັນຊີ -ການເງິນ;
  - ບໍລິຫານທຸລະກິດ ແລະ ສາຂາອື່ນໆ ທີ່ກ່ຽວຂ້ອງກັບທຸລະກິດການເງິນ-ການທະນາຄານ.

❖ ກ່ຽວກັບຜູ້ສະໝັກ (About Applicant):

- ນັກສຶກສາຈົບໃໝ່ ຫຼື ມີປະສົບການໃນການເຮັດວຽກມາກ່ອນ;
- ສາມາດສື່ສານ, ຂຽນ, ອ່ານໄດ້ ລະດັບດີ: (ພາສາອັງກິດ ຫຼື ພາສາຈີນ ຫຼື ພາສາຕ່າງປະເທດໃດໜຶ່ງ);
- ເປັນຄົນທີ່ມີບຸກຄະລິກດີ ແລະ ຮັກໃນການເຮັດວຽກດ້ານການບໍລິການ;
- ມີຄວາມຮູ້ ຄວາມສາມາດໃນການໃຊ້ຄອມພິວເຕີ, ການນຳໃຊ້ MS Office ແລະ Excel ໃນລະດັບດີ;
- ເປັນຄົນທີ່ບໍ່ເຄີຍກໍ່ຄະດີອາຍາ ແລະ ບໍ່ເຄີຍຖືກຕັດອິດສະພາບມາກ່ອນ;
- ສາມາດເຮັດວຽກໄດ້ຫຼາກຫຼາຍ, ມີຄວາມອົດທົນ, ໃສ່ໃຈໃນລາຍລະອຽດ ແລະ ສາມາດເຮັດວຽກເປັນທີມ;
- ເປັນຄົນທີ່ສາມາດເຮັດວຽກກັບເພື່ອນຮ່ວມງານຫຼາຍຄົນໄດ້, ມີຄວາມອົດທົນສູງ, ມີຄວາມລະອຽດໃນໜ້າວຽກທີ່ໄດ້ຮັບມອບໝາຍ, ມີຄວາມຊື່ສັດ ແລະ ຍຶດໝັ້ນໃນໜ້າທີ່.